ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 187/ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 30 ກັນຍາ 2020

ໜັງສືແຈ້ງຕອບ

ເຖິງ: ທ່ານ ຜູ້ອຳນວຍການ ບໍລິສັດ ພິງຊັບທະວີ ກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊິນລະປະທານ ຈຳກັດຜູ້ດຽວ ທີ່ນັບຖື.

ເລື່ອງ: ການສະເໜີຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂອງ ບໍລິສັດ ພິງຊັບທະວີ ກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊິນລະປະທານ ຈຳກັດຜູ້ດຽວ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ຄຳຮ້ອງ ແລະ ເອກະສານປະກອບຂໍຊື້ຮຸ້ນຂອງ ບໍລິສັດ ພິງຊັບທະວີກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊິນລະປະທານ ຈຳກັດຜູ້ດຽວ ສະບັບເລກທີ 475/ພຊອ ລົງວັນທີ 10 ສິງຫາ 2020;
- ອີງຕາມ ທິດຊີ້ນຳຂອງ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງ ປະທານ ຄຄຊ ຜູ້ປະຈຳການ ຄັ້ງວັນທີ 25 ສິງຫາ 2020;
- ອີງຕາມ ໜັງສືສະເໜີໂອນຮຸ້ນຂອງລັດວິສາຫະກິດໄຟຟ້າລາວ ສະບັບເລກທີ 3626/ຟຟລ ລົງວັນທີ 29 ກັນຍາ 2020.

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການສະເໜີຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ບໍລິສັດ ຜ-ຟຟລ) ຂອງ ບໍລິສັດ ພິງຊັບທະວີ ກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊິນລະປະທານ ຈຳກັດຜູ້ດຽວ (ບໍລິສັດ ພຊທອ). ຜ່ານການຄົ້ນຄວ້າໜັງສືສະເໜີ ແລະ ເອກະສານປະກອບການສະເໜີຊື້ຮຸ້ນດັ່ງກ່າວ, ສຄຄຊ ເຫັນດີໃຫ້ ບໍລິສັດ ພຊທອ ດຳເນີນການຊື້ຮຸ້ນຕາມການສະເໜີ.

ພ້ອມນັ້ນ ເພື່ອຮັບປະກັນຂອດການຈັດຕັ້ງປະຕິບັດໃນການຊື້ຮຸ້ນ ສະເໜີໃຫ້ ບໍລິສັດ ພຊທອ ສົມທົບກັບ ລັດວິສາຫະກິດໄຟຟ້າລາວ, ບໍລິສັດ ຜ-ຟຟລ, ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບທີ່ຖືກແຕ່ງຕັ້ງ ເປີດເຜີຍຂໍ້ມູນກ່ຽວກັບການອະນຸຍາດສະເໜີຊື້ຮຸ້ນ ແລະ ປົດສະຫຼຸບຫຍໍ້ກ່ຽວກັບການສະເໜີຊື້ຮຸ້ນດັ່ງກ່າວ ຜ່ານເວັບໄຊ້ ຕະຫຼາດຫຼັກຊັບລາວ ພ້ອມທັງ ດຳເນີນການ ຕາມຂັ້ນຕອນ ແລະ ລະບຽບການກຳນົດ. ພາຍຫຼັງສຳເລັດການດຳເນີນການແລ້ວ ບໍລິສັດ ພຊທອ ຕ້ອງລາຍງານ ຕໍ່ ສຄຄຊ ພາຍໃນເວລາ 5 ວັນລັດຖະການ ພ້ອມທັງເປີດເຜີຍຂໍ້ມູນດັ່ງກ່າວ ໃຫ້ມວນຊົນຮັບຊາບ ຜ່ານ ລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນນີ້ດ້ວຍ.

ຫົວໜ້າສຳນັກງານ

ສາຍສະໝອນ ຈັນທະຈັກ

ສຳເນົາສົ່ງ:
- ຕະຫຼາດຫຼັກຊັບລາວ 01 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ;
- ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ 01 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ;
- ບໍລິສັດ ຜ-ຟຟລ 01 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ;
- ບໍລິສັດ ຟຟລ 01 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ.